# ການລ້ຽງ ງົວທອມ

## ຈຸດປະສົງ:

ລ້ຽງເພື່ອເປັນແຮງງານລາກແກ່, ເປັນເງິນສະສົມຂອງຄອບຄົວ,ການໃຊ້ຈ່າຍເຊັ່ນ: ປຸກເຮືອນ,ຍາມເຈັບເປັນ,ສົ່ງລູກເຂົ້າໂຮງຮຽນ ແລະ ອື່ນໆ.

## ຮູບແບບການລ້ຽງ:

♦ ລ້ຽງແບບປ່ອຍຕາມທົ່ງຫຍ້າທໍາມະຊາດ ແລະ ທົ່ງນາພາຍໃນບ້ານ.



♦ ລ້ຽງແບບປະສົມປະສານກັບການປູກພືດ.

ກ. ທົ່ງຫຍ້າລວມບ້ານ, ທົ່ງຫຍ້າປູກເອງ.

ຂ. ລ່າມໃນຄັງຫຍ້າ.

ຄ. ຂັງໄວ້ໃນຄອກຕັດຫຍ້າໃຫ້ກິນ.

♦ ລ້ຽງປະສົມປະສານກັບການປູກຕົ້ນໄມ້, ໄມ້ກິນໝາກ.

## ແຫລ່ງອາຫານທີ່ສໍາຄັນສໍາລັບສັດລ້ຽງເອື້ອງ:

— ໄດ້ຈາກທົ່ງຫຍ້າທໍາມະຊາດ, ໃບໄມ້ ແລະ ເຟືອງແຫ້ງ ແຕ່ອາຫານໄດ້ຈາກແຫລ່ງດັ່ງກ່າວມີຜົນຜະລິດຕໍ່າ 2—2,5 ໂຕນ/ເຮັກຕາ/ປີ.

— ໄດ້ຈາກການປູກຕົ້ນໄມ້ອາຫານສັດຕາມແລວຮົ້ວບ້ານຫລືສວນຫືວໄຮ່ປາຍນາເຊັ່ນ: (ກະຖິນ, ແຄຂາວ,ແຄຝຣັ່ງ,ຕົ້ນເດື່ອປ່ອງ) ພືດອາຫານສັດດັ່ງກ່າວຈະໄດ້ຜົນຜະລິດສູງກ່ວາທົ່ງຫຍ້າທໍາມະຊາດເຖິງ 98%.

— ການປູກພືດຕະກຸນຖົ່ວ (ສະຕາຍໂລ,ເຊັນໂຕຣ, ອາ ກາເຊັຍ, ກະຖິນ, ຈໍາພວກຖົ່ວຂຽວ, ຖົ່ວເຫືອງ, ຖົ່ວແຮ ) ຈໍາພວກຖົ່ວດັ່ງກ່າວຈະເພີ່ມຄຸນຄ່າທາງດ້ານອາຫານສູງຂື້ນເຮັດໃຫ້ສັດມີການຈະເລີນເຕີບໂຕໄວ,ໄດ້ນໍ້າ ໜັກດີ.

— ໄດ້ຈາກພື້ນທີ່ປູກຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ອຸດສະຫະກໍາ (ສວນປູກຕົ້ນຜ້າວ, ສວນໝາກກ້ຽງ, ຢາງພາລາ).

## ການລ້ຽງງົວທອມ:

1. ພັນງົວທີ່ນໍາມາລ້ຽງຄວນແມ່ນພັນປະສົມເຊັ່ນ: ລູກຂອດງົວພັນບຣາມັນ ແລະ ຊາໂລເລ ຫລື ບຣາ ມັນປະສົມກັບງົວລາດ ເພາະລູກຂອດຈະມີການຈະເລີເຕີບໂຕໄດ້ໄວ.
2. ງົວທີ່ເອົາມາລ້ຽງທອມຕ້ອງ ມີອາ ຍຸປະມານ 17—18 ເດືອນ.
3. ໄລຍະທອມປະມານ 6 ເດືອນ. , ໃຊ້ອາຫານທີ່ມີທາດຊີ້ນສູງ ຈໍາພວກ ສາລີ , ຮໍາ, ມັນຕົ້ນ, ໃບກະຖິນ ແລະ ຈໍາພວກຫຍ້າສົດ ສະ ເລັ່ຽນໍ້າໜັກເພີ້ມປະມານ 800—1,000 ກຣາມ ຕໍ່ ມື້, ອັດຕາການຈະເລີນເຕີບໂຕຖ້າທຽບໃສ່ຈໍານວນອາຫານທີ່ລ້ຽງແມ່ນ 8:1, ສະເລັ່ຽຊີ້ນສົດ 61% ຂອງ ນໍ້າໜັກໂຕເປັນ.



ຮູບ: ງົວລູກຂອດ ພັນບຣາມັນ

4. **ສູດອາຫານງົວທອມ**

— ມັນຕົ້ນ55 ກິໂລ

— ຮໍາ 15 ກິໂລ

— ປຸຍຢູເຣັຍ2,5 ກິໂລ

— ເກືອ0,5 ກິໂລ

— ແປ້ງສາລີ15 ກິໂລ

— ໃບກະຖິນ10 ກິໂລ

— ກະດູກປົ່ນ2 ກິໂລ

ຕາຕະລາງ: ການໃຫ້ອາຫານ ( ກິໂລ/ໂຕ/ມື້ )

ໃຫ້ອາຫານ ແລະ ຫຍ້າສົດ 2 ເທື່ອ/ ມື້

| ນໍ້າໜັກສັດ (ກິໂລ) | 200 | 250 | 300 | 350 |
| --- | --- | --- | --- | --- |
| ອາຫານ (ກິໂລ) | 3 | 3,5 | 4 | 5 |

## ພະຍາດຕົ້ນຕໍ ຂອງງົວ, ຄວາຍ

ພະຍາດທີ່ມັກເກີດມີ ພະຍາດເຕົ້າໂຮມເລືອດ, ພະຍາດໄຂ້ເລືອດດໍາ, ພະຍາດທ້ອງເບັ່ງ, ພະຍາດປາກເປື່ອຍລີ້ງເລັບ ພະຍາດແຫ້ງຕິດຕໍ່ ແລະ ອື່ນໆ.

ພະຍາດດັ່ງກ່າວໄດ້ເຮັດໃຫ້ງົວ, ຄວາຍຕາຍເປັນຈໍານວນຫລວງຫລາຍໃນໄລຍະຜ່ານມາ ປະຈຸບັນກໍຄ່ອຍໆຫລຸດລົງ ເພາະປະຊາຊົນເຮົາໄດ້ສັກວັກຊີນປ້ອງກັນ..



ຮູບ: ການສັກຢາວັກຊີນປ້ອງກັນພະຍາດ

## ການສັກວັກຊີນທີ່ໄດ້ຜົນຄວນປະຕິບັດດັ່ງນີ້:

1. ຕ້ອງສັກວັກຊີນໃຫ້ສັດຕາມກຳນົດເວລາເປັນປະຈຳ ເພື່ອໃຫ້ສັດມີພູມຄຸ້ມກັນໃນລະດັບທີ່ສູງທີ່ສຸດ ສັດຈະສ້າງພູມຄຸ້ມກັນໃນໄລຍະ 2 ອາ ທິດ ຫລັງຈາກສັກວັກຊີນແລ້ວ.
2. ຕ້ອງຮູ້ວິທີການເກັບຮັກສາ ແລະ ວິທີໃຊ້ວັກຊີນແຕ່ລະຊະນິດເປັນຢ່າງດີ.



## ການປ້ອງກັນພະຍາດ ດ້ວຍມາດຕະການທາງການດັ່ງນີ້ :

♦ ກ່ອນຈະນຳສັດໃໝ່ເຂົ້າມາລ້ຽງໃນຝູງ ຕ້ອງແນ່ ໃຈວ່າສັດນັ້ນບໍ່ຕິດເຊື້ອພະຍາດເຊັ່ນ: ພະຍາດແທ້ງລູກຕິດຕໍ່, ພະຍາດວັນນະໂລກ

♦ ລະວັງການເຂົ້າອອກຂອງສັດ,ຄົນ ແລະ ຍານພາຫະນະຜ່ານເຂດທີ່ມີເຊື້ອພະຍາດລະບາດ ເພາະອາດຈະຕິດເຊື້ອມາແຜ່ໄດ້.

♦ ເມື່ອພົບວ່າມີສັດເຈັບຫາກສົງໃສວ່າເປັນພະຍາດຕິດຕໍ່ໃຫ້ແຍກສັດເຈັບນັ້ນອອກຈາກຝູງ ແລະ ທຳການປິ່ນປົວ, ສິ່ງຂັບຖ່າຍຈາກສັດເຈັບຕ້ອງກຳຈັດ ໂດຍການຝັງ ແລະ ເຜົາ ຫລື ໃຊ້ນ້ຳຢາຂ້າເຊື້ອສີດໃສ່ພາຍໃນຄອກ ແລະ ບໍລິເວນຄອກ, ອຸປະກອນຕ່າງໆ

♦ ບໍ່ຄວນກິນຊີ້ນສັດເຈັບ ຫລື ຕາຍເພາະອາດເປັນພະຍາດທີ່ຕິດຄົນໄດ້ ເມື່ອມີສັດຕາຍແບບຕໍ່ເນື່ອງໃຫ້ລາຍງານສັດຕະວະແພດມາກວດເບິ່ງຊາກສັດທັນທີ, ຖ້າບໍ່ມີການກວດກາພະຍາດໃຫ້ ທຳລາຍຊາກພ້ອມກັບສິ່ງຂັບຖ່າຍ ໂດຍການຈູດ ຫລື ຝັງໃຫ້ເລິກໆ ແລະ ເອົາປູນຂາວໂຮຍໃສ່ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ.

**Supported by**
**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ສູນສົ່ງເສີມການລ້ຽງສັດ ແລະ ປາ

# ການລ້ຽງງົວທອມ



**ໜ່ວຍງານຝຶກອົບຮົມ ເຕັກນິກດ້ານການລ້ຽງສັດ ແລະ ປາ**

ໂທລະສັບ: (021) 621018

ແຟກ: (021) 621018

EMail : lec@laotel.com

ສະໜັບສະໜູນໂດຍ : ໂຄງການ ສົ່ງເສີມ ກະສິກຳ (*LEAP*)